**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ...103.../ນຍ

ນະຄອນຫຼວງວຽງຈັນ, ວັນທີ...08-08-2023

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ແລະ ຫົວໜ້າຄະນະຊີ້ນຳຂັ້ນແຂວງ ສຳລັບການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017, ມາດຕາ 19 ຂໍ້ 1 ວ່າດ້ວຍພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ;
- ອີງຕາມ ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດຮອດປີ 2030 ສະບັບເລກທີ 142/ລບ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ ສະບັບເລກທີ 682/ນຍ, ລົງວັນທີ 24 ທັນວາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025, ສະບັບເລກທີ133/ນຍ, ລົງວັນທີ 16 ທັນວາ 2022.
- ອີງຕາມ ເອກະສານສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1526/ກຜທ, ລົງວັນທີ 20 ມິຖຸນາ 2023.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1: ເຫັນດີແຕ່ງຕັ້ງຄະນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ລະດັບຊາດ ຊຶ່ງປະກອບດ້ວຍບັນດາທ່ານດັ່ງນີ້:

1. ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດການປົກຄອງ ແລະ ວັດທະນະທຳ-ສັງຄົມ ເປັນຫົວໜ້າຄະນະຊີ້ນຳລະດັບຊາດ;
2. ທ່ານ ຄຳເຈນ ວົງໂພສີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງຫົວໜ້າຄະນະຊີ້ນຳລະດັບຊາດ;
3. ທ່ານ ນາງ ພອນສະຫວີ ສຸກສະຫວັດ, ຫົວໜ້າສູນສະຖິຕິແຫ່ງຊາດ ເປັນຄະນະ ແລະ ທັງເປັນຜູ້ປະຈຳການ;
4. ທ່ານ ນາງ ລີວົງ ລາວລີ, ຮອງລັດຖະມົນຕີ ກະຊວງພາຍໃນ ເປັນຄະນະ;
5. ທ່ານ ພົຕ ຈັນທອງ ສອນຕະອາດ, ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນຄະນະ;
6. ທ່ານ ພົຕ ຄຳກິ່ງ ພຸຍຫຼ້າມະນີວົງ, ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
7. ທ່ານ ພູທະນູເພັດ ໄຊສົມບັດ, ຮອງລັດຖະມົນຕີ ກະຊວງການເງິນ ເປັນຄະນະ;

8. ທ່ານ ຕິ່ງ ສຸກສັນ, ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນຄະນະ;
9. ທ່ານ ນາງ ມະນີວັນ ເພຍປາວເຮີ, ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ ເປັນຄະນະ;
10. ທ່ານ ປອ. ສຸລິວຸດົງ ສູນດາລາ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
11. ທ່ານ ດຣ. ໄພວັນ ແກ້ວປະເສີດ, ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຄະນະ;
12. ທ່ານ ລີປາວ ຢ່າງ, ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
13. ທ່ານ ໂພສີ ແກ້ວມະນີວົງ, ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
14. ທ່ານ ແກ້ວວິສຸກ ໂສລະພົມ, ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
15. ທ່ານ ນາງ ສີພະຈັນ ນັນທະວົງສາ, ຮອງປະທານສູນກາງແນວລາວສ້າງຊາດ ເປັນຄະນະ;
16. ທ່ານ ນາງ ທຳມາ ເພັດວິໄຊ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ເປັນຄະນະ;
17. ທ່ານ ທອງຈັນ ພູມີພັນ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ;
18. ທ່ານ ເລື່ອມ ສິນສີວິໄລ, ຮອງຫົວໜ້າສູນສະຖິຕິແຫ່ງຊາດ ເປັນຄະນະ;
19. ທ່ານ ນາງ ເພັດສະໝອນ ສອນ, ຮອງຫົວໜ້າສູນສະຖິຕິແຫ່ງຊາດ ເປັນຄະນະ;
20. ທ່ານ ນາງ ທີລະດາ ຈັນທະລາບູວົງ, ຫົວໜ້າກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ ແລະ ທັງເປັນຫົວໜ້າຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດຂັ້ນສູນກາງ ເປັນຄະນະ;
21. ທ່ານ ຟອງສະມຸດ ຄຳວານວົງສາ, ຫົວໜ້າຫ້ອງການ, ສູນສະຖິຕິແຫ່ງຊາດ ເປັນຄະນະ;
22. ທ່ານ ຄຳພັນ ຈະເລີນພົນ, ຫົວໜ້າກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ ເປັນຄະນະ;
23. ທ່ານ ວິໄຊ ສັນຕິວົງ, ຫົວໜ້າກົມສະຖິຕິສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ, ສູນສະຖິຕິແຫ່ງຊາດ ເປັນຄະນະ;
24. ທ່ານ ໄພເລີດ ພົມບູລົມ, ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;
25. ທ່ານ ສົມບູນ ອິນທະປັດຖາ, ຫົວໜ້າຫ້ອງການ, ກະຊວງການເງິນ ເປັນຄະນະ;
26. ທ່ານ ພົຈວ ໝູໃບ ອິນທິສານ, ຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
27. ທ່ານ ພັອ ສຳລານ ສີລີໂພຄຳ, ຫົວໜ້າກົມກຳລັງພົນ, ກົມໃຫຍ່ເສນາທິການ, ກະຊວງປ້ອງກັນປະເທດ ເປັນຄະນະ;
28. ທ່ານ ນາງ ວິໄລທອນ ສູນທອນໄຊມົງຄຸນ, ຫົວໜ້າຫ້ອງການ, ກະຊວງພາຍໃນ ເປັນຄະນະ;
29. ທ່ານ ໄມທອງ ທຳມະວົງສາ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ກະຊວງການຕ່າງປະເທດ ເປັນຄະນະ;
30. ທ່ານ ສົມເພັດ ຈິດຕະວັນ, ຫົວໜ້າກົມວັດທະນະທຳ, ກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ ເປັນຄະນະ;
31. ທ່ານ ມະອາລີ ວໍລະບຸດ, ຮອງຫົວໜ້າກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
32. ທ່ານ ປອ. ດຣ. ບຸນເສີດ ແກ້ວປະເສີດ, ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງສາທາລະນະສຸກ ເປັນຄະນະ;
33. ທ່ານ ນາງ ແພງຈັນ ແພງເມືອງ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
34. ທ່ານ ວິໄລພົງ ສີສົມຫວັງ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
35. ທ່ານ ສຸດໃຈ ພົມມະສີ, ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
36. ທ່ານ ນາງ ສຸກພາພອນ ຜານິດ, ຫົວໜ້າຫ້ອງການ, ສູນກາງສະຫະພັນແມ່ຍິງລາວ ເປັນຄະນະ;
37. ທ່ານ ສຸລິຍາ ແກ້ວພິລາວົງ, ເລຂາທິການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຫົວໜ້າຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ.

- ສິດ ແລະ ໜ້າທີ ຄະນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ລະດັບຊາດ ມີ ດັ່ງນີ້:
  1) ພິຈາລະນາ ແລະ ຮັບຮອງແຜນການການສຳຫຼວດ, ເນື້ອໃນ ແລະ ຮັບຮອງຜົນການສຳຫຼວດ;
  2) ແຕ່ງຕັ້ງຫ້ອງການສຳຫຼວດຂັ້ນສູນກາງ ແລະ ກອງເລຂາ ຊ່ວຍວຽກ ການສຳຫຼວດ;
  3) ຊຸກຍູ້, ຕິດຕາມ ແລະ ລະດົມແຫຼ່ງທຶນເຂົ້າໃນການສຳຫຼວດໃຫ້ພຽງພໍ ແລະ ທັນເວລາເພື່ອຮັບປະກັນການດຳເນີນການສຳຫຼວດໃຫ້ທັນການ;
  4) ນຳພາ ແລະ ປຸກລະດົມໃຫ້ທຸກພາກສ່ວນເຂົ້າຮ່ວມການສຳຫຼວດຢ່າງຈິງໃຈ ແລະ ມີປະສິດທິພາບ;
  5) ຈັດຕັ້ງໂຄສະນາເຜີຍແຜ່ຈຸດປະສົງເປົ້າໝາຍຂອງການສຳຫຼວດດັ່ງກ່າວໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ເຂົ້າໃຈແຈ້ງ ເພື່ອໃຫ້ປະກອບສ່ວນຢ່າງຈິງໃຈຕໍ່ການສຳຫຼວດ;
  6) ລົງຊຸກຍູ້, ຕິດຕາມ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດການສຳຫຼວດໃນພາກສະໜາມ;
  7) ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ໃນແຕ່ລະໄລຍະຂອງບັ້ນການສຳຫຼວດ;
  8) ປະສານສົມທົບກັບການນຳ ແລະ ການຈັດຕັ້ງທຸກຂັ້ນ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ-ຄວາມປອດໄພ ໃນຊ່ວງໄລຍະຂອງການສຳຫຼວດ;
  9) ລາຍງານສະພາບການດຳເນີນງານການສຳຫຼວດໃຫ້ລັດຖະບານ ແຕ່ລະໄລຍະ ແລະ ປະກາດຜົນຂອງການສຳຫຼວດຢ່າງເປັນທາງການ.

**ມາດຕາ 2:** ແຕ່ງຕັ້ງຫົວໜ້າຄະນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ຂັ້ນແຂວງ ປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ອາດສະພັງທອງ ສີພັນດອນ, ເຈົ້າຄອງນະຄອນຫຼວງວຽງຈັນ, ເປັນຫົວໜ້າຄະນະຊີ້ນຳນະຄອນຫຼວງວຽງຈັນ;
2. ທ່ານ ຄຳຜອຍ ວັນນະສານ, ເຈົ້າແຂວງຜົ້ງສາລີ, ເປັນຫົວໜ້າຄະນະຊີ້ນຳແຂວງຜົ້ງສາລີ;
3. ທ່ານ ວຽງສະຫວັດ ສີພັນດອນ, ເຈົ້າແຂວງຫຼວງນ້ຳທາ, ເປັນຫົວໜ້າຄະນະຊີ້ນຳແຂວງຫຼວງນ້ຳທາ;
4. ທ່ານ ບຸນຄົງ ຫຼ້າຈຽມພອນ, ເຈົ້າແຂວງອຸດົມໄຊ, ເປັນຫົວໜ້າຄະນະຊີ້ນຳແຂວງອຸດົມໄຊ;
5. ທ່ານ ບົວຄົງ ນາມມະວົງ, ເຈົ້າແຂວງບໍ່ແກ້ວ, ເປັນຫົວໜ້າຄະນະຊີ້ນຳແຂວງບໍ່ແກ້ວ;
6. ທ່ານ ຄຳຂັນ ຈັນທະວິສຸກ, ເຈົ້າແຂວງຫຼວງພະບາງ, ເປັນຫົວໜ້າຄະນະຊີ້ນຳແຂວງຫຼວງພະບາງ;
7. ທ່ານ ວັນໄຊ ແພງຊຸມມາ, ເຈົ້າແຂວງຫົວພັນ, ເປັນຫົວໜ້າຄະນະຊີ້ນຳແຂວງຫົວພັນ;
8. ທ່ານ ພົງສະຫວັນ ສິດທະວົງ, ເຈົ້າແຂວງໄຊຍະບູລີ, ເປັນຫົວໜ້າຄະນະຊີ້ນຳແຂວງໄຊຍະບູລີ;
9. ທ່ານ ບຸນຈັນ ສີວົງພັນ, ເຈົ້າແຂວງຊຽງຂວາງ, ເປັນຫົວໜ້າຄະນະຊີ້ນຳແຂວງຊຽງຂວາງ;
10. ທ່ານ ຄຳພັນ ສິດທິດຳພາ, ເຈົ້າແຂວງວຽງຈັນ, ເປັນຫົວໜ້າຄະນະຊີ້ນຳແຂວງວຽງຈັນ;
11. ທ່ານ ປອ. ກອງແກ້ວ ໄຊສົງຄາມ, ເຈົ້າແຂວງບໍລິຄຳໄຊ, ເປັນຫົວໜ້າຄະນະຊີ້ນຳແຂວງບໍລິຄຳໄຊ;
12. ທ່ານ ວັນໄຊ ຟອງສະຫວັນ, ເຈົ້າແຂວງຄຳມ່ວນ, ເປັນຫົວໜ້າຄະນະຊີ້ນຳແຂວງຄຳມ່ວນ;
13. ທ່ານ ບຸນໂຈມ ອຸບົນປະເສີດ, ເຈົ້າແຂວງສະຫວັນນະເຂດ, ເປັນຫົວໜ້າຄະນະຊີ້ນຳແຂວງສະຫວັນນະເຂດ;
14. ທ່ານ ປອ. ດາວວົງ ພອນແກ້ວ, ເຈົ້າແຂວງສາລະວັນ, ເປັນຫົວໜ້າຄະນະຊີ້ນຳແຂວງສາລະວັນ;
15. ທ່ານ ເຫຼັກໄຫຼ ສີວິໄລ, ເຈົ້າແຂວງເຊກອງ, ເປັນຫົວໜ້າຄະນະຊີ້ນຳແຂວງເຊກອງ;
16. ທ່ານ ປອ. ວິໄລວົງ ບຸດດາຄຳ, ເຈົ້າແຂວງຈຳປາສັກ, ເປັນຫົວໜ້າຄະນະຊີ້ນຳແຂວງຈຳປາສັກ;
17. ທ່ານ ພົທ ວັນທອງ ກອງມະນີ, ເຈົ້າແຂວງອັດຕະປື, ເປັນຫົວໜ້າຄະນະຊີ້ນຳແຂວງອັດຕະປື;
18. ທ່ານ ພອຍຄຳ ຮຸ່ງບຸນຍວງ, ເຈົ້າແຂວງ ໄຊສົມບູນ, ເປັນຫົວໜ້າຄະນະຊີ້ນຳແຂວງໄຊສົມບູນ;

❖ ສິດ ແລະ ໜ້າທີ່ ຄະນະຊີ້ນໍາການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ຂັ້ນແຂວງ ມີດັ່ງນີ້:

1) ນໍາພາຊີ້ນໍາການຈັດຕັ້ງປະຕິບັດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ໃຫ້ສໍາເລັດຕາມກໍານົດໝາຍຂອງການສໍາຫຼວດ;
2) ຊຸກຍູ້, ຕິດຕາມ ແລະ ລະດົມທຶນເຂົ້າໃນການສໍາຫຼວດຢູ່ຂັ້ນທ້ອງຖິ່ນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025;
3) ອອກແຈ້ງການປະກາດກ່ຽວກັບຜົນການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ໃນຂອບເຂດແຂວງຂອງຕົນ;
4) ແຕ່ງຕັ້ງຫ້ອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ປີ 2025 ຂັ້ນແຂວງ ແລະ ກອງເລຂາຊ່ວຍວຽກ;
5) ນໍາພາ ແລະ ປຸກລະດົມໃຫ້ທຸກພາກສ່ວນເຂົ້າຮ່ວມການສໍາຫຼວດຢ່າງຈິງໃຈ ແລະ ມີປະສິດທິພາບ;
6) ຈັດຕັ້ງໂຄສະນາເຜີຍແຜ່ຈຸດປະສົງ, ເປົ້າໝາຍ ແລະ ລະດັບຄາດໝາຍຂອງການສໍາຫຼວດດັ່ງກ່າວໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ເຂົ້າໃຈແຈ້ງ ເພື່ອໃຫ້ປະກອບສ່ວນຢ່າງຈິງໃຈຕໍ່ການສໍາຫຼວດ;
7) ພິຈາລະນາ ແລະ ຮັບຮອງແຜນການເຄື່ອນໄຫວຂອງການສໍາຫຼວດຂອງເມືອງ ໂດຍຜ່ານກອງປະຊຸມຄະນະຊີ້ນໍາການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຂັ້ນແຂວງ;
8) ກວດກາສະພາບການກຽມພ້ອມລົງເກັບກໍາສໍາຫຼວດພາກສະໜາມຂອງແຕ່ລະເມືອງ ແຕ່ລະເຂດສໍາຫຼວດນັບທັງງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ການສໍາຫຼວດ;
9) ຈັດແບ່ງຄວາມຮັບຜິດຊອບລະຫວ່າງຄະນະຊີ້ນໍາໃຫ້ຈະແຈ້ງ ແລະ ມີແຜນລົງຊີ້ນໍາ, ຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດການສໍາຫຼວດໃນພາກສະໜາມ ເພື່ອຮັບປະກັນຄວາມຊັດເຈນ, ຄວາມຄົບຖ້ວນຂອງການເກັບກໍາຂໍ້ມູນ ແລະ ໃຫ້ສໍາເລັດຕາມກໍານົດໝາຍຂອງການສໍາຫຼວດ ດ້ວຍປະສິດທິພາບ ແລະ ປະສິດທິຜົນສູງ;
10) ໃຫ້ທິດຊີ້ນໍາໃນການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຂັ້ນແຂວງ ໃນແຕ່ລະໄລຍະຂອງບັ້ນການສໍາຫຼວດ;
11) ປະສານສົມທົບກັບການນໍາ ແລະ ການຈັດຕັ້ງທຸກຂັ້ນ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ-ຄວາມປອດໄພໃນຊ່ວງໄລຍະຂອງການສໍາຫຼວດ;
12) ລາຍງານສະພາບການດໍາເນີນງານການສໍາຫຼວດໃຫ້ຄະນະຊີ້ນໍາລະດັບຊາດແຕ່ລະໄລຍະ ແລະ ປະກາດຜົນ ຂອງການສໍາຫຼວດຂັ້ນແຂວງຢ່າງເປັນທາງການ.

**ມາດຕາ 3:** ມອບໃຫ້ຄະນະຊີ້ນໍາການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ລະດັບຊາດ ແລະ ຂັ້ນແຂວງ ສ້າງແຜນການດໍາເນີນງານຂອງການສໍາຫຼວດ ແລະ ແຜນງົບປະມານ ແລະ ແຕ່ງຕັ້ງຄະນະຊ່ວຍວຽກຂອງຕົນ ເພື່ອຈັດຕັ້ງປະຕິບັດການສໍາຫຼວດໃນແຕ່ລະຂັ້ນຕາມຄວາມເໝາະສົມ.

**ມາດຕາ 4:** ທຸກພາກສ່ວນທີ່ຖືກແຕ່ງຕັ້ງຢູ່ໃນຂໍ້ຕົກລົງສະບັບນີ້ຈົ່ງຮັບຮູ້ ແລະ ປະຕິບັດຕາມພາລະບົດບາດຢ່າງເຂັ້ມງວດ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຈະສິ້ນສຸດການນໍາໃຊ້ນັບແຕ່ມື້ປະກາດຜົນການສໍາຫລວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025 ຢ່າງເປັນທາງການ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ